ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0290 ອຄ

ນະຄອນຫລວງວຽງຈັນ, ວັນທີ 09 ກຸມພາ 2010

# ບົດແນະນຳ

## ກ່ຽວກັບ ການຈັດຕັ້ງປະຕິບັດ ບາງມາດຕາ ໃນໝວດທີ 2 ພາກທີ II ແລະ ພາກທີ VIII ຂອງກົດໝາຍວ່າດ້ວຍວິສາຫະກິດ

- ອີງຕາມໝວດທີ 2 ພາກທີ II ແລະ ພາກທີ VIII ຂອງກົດໝາຍວ່າດ້ວຍວິສາຫະກິດ;
- ອີງຕາມ ມາດຕາ 7 ດຳລັດ ສະບັບເລກທີ 68/ນຍ, ລົງວັນທີ 28/4/2008, ວ່າດ້ວຍການຮັບຮອງເອົາບັນຊີປະເພດທຸລະກິດຄວບຄຸມ;
- ອີງຕາມດຳລັດ, ສະບັບເລກທີ 188/ນຍ, ລົງວັນທີ 17/8/2006, ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ.

ເພື່ອເຮັດໃຫ້ເນື້ອໃນ ຈິດໃຈຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ດຳລັດຂອງນາຍົກ ສະບັບເລກທີ 68/ນຍ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ມີປະສິດທິຜົນ ແນໃສ່: ດ້ານໜຶ່ງ - ລົບລ້າງຂັ້ນຂອດ ທີ່ເປັນອຸປະສັກສ້າງຄວາມລຳຄານແກ່ການລົງທຶນແລະການປະກອບອາຊີບຂອງປະຊາຊົນບັນດາເຜົ່າ, ດ້ານສອງ - ສະກັດກັ້ນການລະເມີດບົດບັນຍັດຂອງລະບຽບ ກົດໝາຍໃນຮູບແບບຕ່າງໆ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກບົດແນະນຳ ກ່ຽວກັບການຈັດຕັ້ງປະຕິບັດ ບາງມາດຕາ ຂອງໝວດທີ 2 ພາກທີ II ແລະ ພາກທີ VIII ຂອງກົດໝາຍວ່າດ້ວຍວິສາຫະກິດ ດັ່ງນີ້:

1. ການຂຶ້ນທະບຽນວິສາຫະກິດ ໃນປະເພດທຸລະກິດ ທີ່ບໍ່ນອນໃນບັນຊີຄວບຄຸມ ຕາມວັກໜຶ່ງ ມາດຕາ 14 ຂອງກົດໝາຍວ່າດ້ວຍວິສາຫະກິດນັ້ນ ຕ້ອງເປັນໄປຢ່າງວ່ອງໄວ ງ່າຍດາຍ ແຕ່ນັ້ນກໍບໍ່ໄດ້ໝາຍຄວາມວ່າຈະເປັນໄປຢ່າງອັດຕາໂນມັດທຸກປະການ ທັງນີ້ເຈົ້າໜ້າທີ່ທະບຽນວິສາຫະກິດຕ້ອງກວດກາໃຫ້ລະອຽດວ່າປະເພດທຸລະກິດທີ່ບໍ່ຢູ່ໃນບັນຊີຄວບຄຸມນັ້ນ ຖືກຫ້າມ ຫລື ຈຳກັດຈຳນວນ ຫລື ພື້ນທີ່ຢ່າງໃດຢ່າງໜຶ່ງໃນການອອກທະບຽນວິສາຫະກິດ ຕາມລະບຽບ ກົດໝາຍຂອງບັນດາຂະແໜງການກ່ຽວຂ້ອງ ຫລື ບໍ່, ຖ້າມີກໍຕ້ອງປະຕິບັດໃຫ້ຖືກຕ້ອງ ແລະ ເຂັ້ມງວດຕາມນັ້ນ ຕົວຢ່າງ ການຂາຍຍ່ອຍນ້ຳມັນເຊື້ອໄຟ ບໍ່ນອນໃນບັນຊີຄວບຄຸມ ແຕ່ມີລະບຽບການ ຫ້າມບໍ່ໃຫ້ສ້າງຕັ້ງຫົວໜ່ວຍທຸລະກິດປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟເພີ້ມເຕີມອີກ ໃນນະຄອນຫຼວງວຽງຈັນ ດັ່ງນີ້ເປັນຕົ້ນ;

2. ຂໍ້ 2 ມາດຕາ 14 ຂອງກົດໝາຍວ່າດ້ວຍວິສາຫະກິດ ບັນຍັດຜົນຂອງການຂຶ້ນທະບຽນວິສາຫະກິດໄວ້ວ່າ: *"ເຮັດໃຫ້ວິສາຫະກິດ ສາມາດເຄື່ອນໄຫວທຸລະກິດໄດ້ ໃນບັນດາຂະແໜງທຸລະກິດທີ່ໄດ້ກຳນົດໄວ້ໃນໃບທະບຽນວິສາຫະກິດ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດ ຫຼື ກວດສອບຜ່ານຂະແໜງການກ່ຽວຂ້ອງອີກ ເວັ້ນເສຍແຕ່ບາງປະເພດທຸລະກິດທີ່ໄດ້ກຳນົດໄວ້ ໃນບັນຊີປະເພດທຸລະກິດຄວບຄຸມ ຕາມທີ່ໄດ້ກຳນົດໄວ້ໃນ ວັກສອງ ມາດຕາ 14 ຂອງກົດໝາຍສະບັບນີ້"*. ຈາກບົດບັນຍັດນີ້ ຕ້ອງແຍກຄວາມເຂົ້າໃຈໃຫ້ຖືກຕ້ອງໃນ 3 ສ່ວນ ຄື:

- ຄຳວ່າ "*<u>ສາມາດເຄື່ອນໄຫວທຸລະກິດໄດ້</u>*" ໝາຍເຖິງວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດແລ້ວສາມາດເລີ່ມເຄື່ອນໄຫວທຸລະກິດໃນກິດຈະກຳ ເຊັ່ນ (ຕົວຢ່າງ-ບໍລິສັດຜະລິດຢາ): ແລ່ນເລື່ອງທີ່ດິນເພື່ອປຸກໂຮງງານ; ຂໍອະນຸຍາດປຸກສ້າງໂຮງງານ, ປຸກສ້າງໂຮງງານ...ແລະ ປະຕິບັດກິດຈະກຳຕ່າງໆຈົນເຖິງຂັ້ນຕອນຜະລິດ ແລະ ຈຳໜ່າຍຢາດັ່ງນີ້ເປັນຕົ້ນ. ການເຄື່ອນໄຫວທັງໝົດນີ້ຕ້ອງສອດຄ່ອງ ແລະ ເປັນໄປຕາມຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ກົດໝາຍທີ່ກ່ຽວຂ້ອງ ຂອງຂະແໜງການບໍ່ວ່າຈະເປັນປະເພດທຸລະກິດຢູ່ນອກ ຫລື ຢູ່ໃນບັນຊີຄວບຄຸມກໍຕາມ - ບໍ່ແມ່ນ (ສາມາດເຄື່ອນໄຫວທຸລະກິດໄດ້) ແບບຕາມໃຈ ບໍ່ລົນກັບລະບຽບ ກົດໝາຍ ເຊັ່ນ ອັນໃດລະບຽບ ກົດໝາຍຫ້າມ ກໍເຮັດບໍ່ໄດ້ ຫລື ອັນໃດເຮັດ ໄດ້ ແຕ່ມີເງື່ອນໄຂຈຳກັດ ຫລື ບັງຄັບປະການໃດກໍຕ້ອງເປັນໄປຕາມນັ້ນຢ່າງເຂັ້ມງວດ. ການຂຶ້ນທະບຽນວິສາຫະກິດ ເປັນພຽງການໃຫ້ກຳເນີດບຸກຄົນ ຫລື ນິຕິບຸກຄົນ ສ່ວນການເຄື່ອນໄຫວ(ການປະຕິບັດສິດ ຫລື ພັນທະ) ຂອງບຸກຄົນ ຫລື ນິຕິບຸກຄົນນັ້ນ ຍ່ອມຕ້ອງສອດຄ່ອງກັບລະບຽບ ກົດໝາຍ ;
- ຄຳວ່າ: *<u>ສາມາດເຄື່ອນໄຫວທຸລະກິດໄດ້.....ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດ ຫຼື ກວດສອບຜ່ານຂະແໜງການກ່ຽວຂ້ອງອີກ</u>* ໝາຍເຖິງ ເມື່ອໄດ້ຂຶ້ນທະບຽນວິສາຫະກິດແລ້ວ ກົດໝາຍວິສາຫະກິດຖືວ່າ ຂະບວນການ ຫລື ຂັ້ນຕອນການສ້າງຕັ້ງວິສາຫະກິດ ເປັນອັນສິ້ນສຸດ ແລະ ຕ້ອງບໍ່ມີຂັ້ນຕອນຂໍອະນຸຍາດ ຫລື ການກວດສອບຜ່ານຂະແໜງການກ່ຽວຂ້ອງໃດໆອີກ <u>ທີ່ກ່ຽວຂ້ອງກັບການສ້າງຕັ້ງວິສາຫະກິດ</u> ແຕ່ຂະບວນການ ຫລື ຂັ້ນຕອນຂໍອະນຸຍາດ, ໃບຢັ້ງຢືນ ແລະ ອື່ນໆ (ພາຍຫຼັງການສ້າງຕັ້ງ ຫລື ຂຶ້ນທະບຽນວິສາຫະກິດແລ້ວ) ເພື່ອເຄື່ອນໄຫວທຸລະກິດນັ້ນ ແມ່ນຕ້ອງປະຕິບັດຢ່າງເຂັ້ມງວດຕາມຂະບວນການ ຫລື ຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນ ລະບຽບ ກົດໝາຍທີ່ກ່ຽວຂ້ອງຂອງຂະແໜງການ ຕົວຢ່າງ ເຮັດທຸລະກິດໂຮງແຮມ ກໍຕ້ອງແລ່ນຂໍອະນຸຍາດປຸກສ້າງ ແລະ ປະຕິບັດຕາມລະບຽບການກ່ຽວກັບທຸລະກິດໂຮງແຮມຂອງຂະແໜງຄຸ້ມຄອງວຽກງານທ່ອງທ່ຽວ ທຸກປະການ;
- ຄຳວ່າ: *<u>ເວັ້ນເສຍແຕ່ບາງປະເພດທຸລະກິດທີ່ໄດ້ກຳນົດໄວ້ໃນບັນຊີປະເພດທຸລະກິດຄວບຄຸມ</u>*ນັ້ນ ໝາຍເຖິງ ໃນຂັ້ນຕອນຂອງການສ້າງຕັ້ງວິສາຫະກິດ (ກ່ອນການອອກທະບຽນວິສາຫະກິດ) ປະເພດທຸລະກິດໃດ ທີ່ນອນຢູ່ໃນບັນຊີປະເພດທຸລະກິດຄວບຄຸມ ຕ້ອງໄດ້ຜ່ານການກວດສອບ ຫລື ຂໍອະນຸຍາດ ຈາກຂະແໜງການກ່ຽວຂ້ອງສາກ່ອນ ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 14 ກົດໝາຍວ່າດ້ວຍວິສາຫະກິດ;

3. ການມອບໝາຍໃຫ້ກະຊວງ, ພະແນກອຸດສາຫະກຳແລະການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຫລື ເທດສະບານຕ່າງໆ ຂຶ້ນທະບຽນວິສາຫະກິດ ແມ່ນເພື່ອສ້າງຄວາມສະດວກແກ່ຜູ້ປະກອບການ ຫລື ປະຊາຊົນບັນດາເຜົ່າໃນການປະກອບອາຊີບຂອງຕົນ. ການທີ່ກະຊວງ, ແຂວງ ຫລື ເມືອງໜຶ່ງຂຶ້ນທະບຽນວິສາຫະກິດໃຫ້ວິສາຫະກິດໜຶ່ງ ຈະເຮັດໃຫ້ວິສາຫະກິດນັ້ນມີຕົວຕົນ

ຖືກຕ້ອງ ມີສິດ ແລະ ພັນທະຕາມລະບຽບ ກົດໝາຍ ແລະ ຈະກາຍເປັນວິສາຫະກິດໜຶ່ງຂອງປະເທດ ບໍ່ແມ່ນຂອງກະຊວງ, ແຂວງ ຫລື ເມືອງທີ່ອອກທະບຽນວິສາຫະກິດໃຫ້. ວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດສາມາດເຄື່ອນໄຫວທຸລະກິດ ໃນຂອບເຂດທົ່ວປະເທດ ຫລື ກັບຕ່າງປະເທດໄດ້ຕາມລະບຽບ ກົດໝາຍ (ເວັ້ນເສັຍແຕ່ໄດ້ມີການກຳນົດເປັນການສະເພາະສຳລັບເລື່ອງໃດໜຶ່ງໄວ້ເປັນຢ່າງອື່ນ), ສະນັ້ນ, ວິສາຫະກິດເຄື່ອນໄຫວຢູ່ບ່ອນໃດ ບ່ອນນັ້ນມີໜ້າທີ່ ແລະຄວາມຮັບຜິດຊອບໃນການຄຸ້ມຄອງ ຕິດຕາມ ກວດກາຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 6 ມາດຕາ 227, ຂໍ້ 2 ມາດຕາ 228 ແລະ ຂໍ້ 3 ມາດຕາ 229 ຂອງກົດໝາຍວິສາຫະກິດ ບໍ່ແມ່ນວ່າ ໄດ້ອອກທະບຽນວິສາຫະກິດໃຫ້ ຈຶ່ງມີຄວາມຮັບຜິດຊອບໃນການຄຸ້ມຄອງແຕ່ປະການໃດ.

4. ມອບໃຫ້ກົມການຄ້າພາຍໃນ (ກະຊວງອຸດສາຫະກຳ ແລະ ການຄ້າ), ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ/ເທດສະບານ ຈັດຕັ້ງເຜີຍແຜ່ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໃນຂອບເຂດຮັບຜິດຊອບຂອງຕົນໄດ້ຮັບຮູ້ ຫລື ຮັບຊາບຢ່າງກວ້າງຂວາງ ທົ່ວເຖິງ ພ້ອມທັງເປັນເຈົ້າການໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ມີປະສິດທິຜົນ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ;

ລັດຖະມົນຕີ

ດຣ. ນາມ ວິຍະເກດ